สาทาละละลัด ปะຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານນາຍົກລັດຖະມົນຕີ ເລກທີ 46 /ນຍ

ນະຄອນຫລວງວຽງຈັນ, ວັນທີ 29.09.2009

# ຄຳສັ່ງ
# ຂອງນາຍົກລັດຖະມົນຕີ ກ່ຽວກັບການເພີ່ມທະວີ ຄວາມເອົາໃຈໃສ່ຕໍ່ວຽກງານຍຸຕິທຳຮາກຖານ

**ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ**

ວຽກງານຍຸຕິທຳຮາກຖານ ເປັນວຽກງານໜຶ່ງທີ່ມີບົດບາດສຳຄັນ, ຊຶ່ງພົວພັນເຖິງວຽກງານທຸກດ້ານຢູ່ຮາກຖານ, ເປັນຕົ້ນແມ່ນ ການສ້າງຮາກຖານບ້ານ ແລະ ກຸ່ມບ້ານພັດທະນາ. ໃນໄລຍະທີ່ຜ່ານມາ, ບັນດາຂະແໜງການ ແລະ ອົງການຂັ້ນສູນກາງ ກໍຄືອົງການນຳ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ເອົາໃຈໃສ່ຊີ້ນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໂດຍຕິດພັນກັບຂະບວນການລວມຂອງການສ້າງຮາກຖານບ້ານ ແລະ ກຸ່ມບ້ານພັດທະນາ, ເຮັດໃຫ້ຮາກຖານບ້ານ ແລະ ກຸ່ມບ້ານໃນຫຼາຍ ບ້ານທົ່ວປະເທດໄດ້ຮັບການພັດທະນາຢ່າງຮອບດ້ານ, ສັງຄົມມີຄວາມສະ ງົບ ແລະ ມີຄວາມຍຸຕິທຳດີຂຶ້ນ. ແຕ່ຄຽງຄູ່ກັນນັ້ນ, ເຫັນວ່າຄຸນນະພາບບາງ ດ້ານຂອງວຽກງານຍຸຕິທຳຮາກຖານຍັງບໍ່ທັນສູງ, ຄວາມຮັບຮູ້ເຂົ້າໃຈຕໍ່ທີ່ຕັ້ງ, ບົດບາດ

ແລະ ວິທີຈັດຕັ້ງດຳເນີນວຽກງານດັ່ງກ່າວນີ້ ຢູ່ໃນຫຼາຍບ່ອນຍັງບໍ່ທັນເລິກເຊິ່ງ, ຢູ່ບາງບ່ອນການຈັດຕັ້ງປະຕິບັດຍັງບໍ່ທັນມີຄວາມເປັນເອກະພາບກັນ, ທາງດ້ານທັດສະນະຊີ້ນຳ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຊັກຊ້າ ແລະ ປະສິດທິຜົນບໍ່ສູງ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານໃນຕໍ່ໜ້ານີ້ ໄດ້ສືບຕໍ່ດຳເນີນຢ່າງເປັນຂະບວນການແຂງແຮງ, ເນື່ອງນິດລຽນຕິດ, ຖືກກັບທິດທາງ ແລະ ເປັນເອກະພາບສູງ ຕາມຈິດໃຈຊີ້ນຳຂອງກົມການເມືອງສູນກາງພັກກ່ຽວກັບ **"4 ເນື້ອໃນ 4 ຄາດໝາຍ"** ຂອງວຽກງານກໍ່ສ້າງຮາກຖານນັ້ນ.

## ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ

## ອອກຄຳສັ່ງ:

### 1. ຄວາມໝາຍສຳຄັນຂອງວຽກງານຍຸຕິທຳຮາກຖານ

- ວຽກງານຍຸຕິທຳຮາກຖານ ເປັນວຽກງານໜຶ່ງທີ່ມີທີ່ຕັ້ງ, ພາລະບົດບາດສຳຄັນຍິ່ງເປັນວຽກງານໜຶ່ງທີ່ຕິດພັນກັບວຽກງານທຸກດ້ານຢູ່ຮາກຖານ ຕາມຄຳສັ່ງແນະນຳເລກທີ 09/ກມສພ, ລົງວັນທີ 08 ມີນາ 2004 ແລະ ຄຳສັ່ງເພີ່ມເຕີມເລກທີ 13/ນຍ, ລົງວັນທີ 09 ມິຖຸນາ 2008 ຊຶ່ງໄດ້ຮັບການຈັດຕັ້ງປະຕິບັດໄປພ້ອມໆກັບຂະບວນການກໍ່ສ້າງຮາກຖານ, ການສ້າງບ້ານ ແລະ ກຸ່ມບ້ານພັດທະນາຮອບດ້ານແນໃສ່ເຮັດໃຫ້ການພັດທະນາປະເທດຊາດບັນລຸບັນດາຈຸດໝາຍຍຸດທະສາດຂອງພັກ ແລະ ລັດເຮົາຄື: **"ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ"**
- ວຽກງານຍຸຕິທຳຮາກຖານ ແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກ່ຽວກັບ **"ການສ້າງລັດແຫ່ງກົດໝາຍ"** ເຂົ້າສູ່

ຮາກຖານບ້ານ ແລະ ກຸ່ມບ້ານພັດທະນາໂດຍຜ່ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະບວນການວຽກງານຍຸຕິທຳຮາກຖານ, ຮັບປະກັນການປະຕິບັດຄວາມສະເໝີພາບບົນພື້ນຖານກົດໝາຍ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ມີໂອກາດຮຽນຮູ້ກ່ຽວກັບລະບຽບກົດໝາຍຢ່າງທົ່ວເຖິງ ແລະ ມີສ່ວນຮ່ວມໃນການປັບປຸງ ແລະ ຍົກຄຸນນະພາບຂອງການສ້າງບ້ານປອດຄະດີ ແລະ ການໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນໃນການເຂົ້າຮ່ວມພັດທະນາຄອບຄົວ ແລະ ບ້ານ. ສະກັດກັ້ນ, ແກ້ໄຂຂໍ້ຂັດແຍ່ງຕ່າງໆໃຫ້ຕົກແຕກແຕ່ຫົວທີ, ປັບປຸງ, ເພີ່ມທະວີຄວາມສາມັກຄີພາຍໃນຄອບຄົວ ແລະ ພາຍໃນບ້ານໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ.

## 2. ຈຸດປະສົງລະດັບຄາດໝາຍຂອງວຽກງານຍຸຕິທຳຮາກຖານ

ການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານ ແມ່ນແນໃສ່ໃຫ້ບັນລຸຈຸດປະສົງລະດັບຄາດໝາຍດັ່ງນີ້:

- ສ້າງສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍໃຫ້ແກ່ພະນັກງານຮາກຖານ ແລະ ປະຊາຊົນບັນດາເຜົ່າຢູ່ບ້ານໃຫ້ສູງຂຶ້ນ, ສາມາດເປັນເຈົ້າການສະກັດກັ້ນ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆໂດຍສັນຕິວິທີ, ສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການທາງດ້ານລະບຽບກົດໝາຍ ແລະ ຮູ້ເສີມຂະຫຍາຍສິດເປັນເຈົ້າຂອງຕົນຕາມກົດໝາຍກຳນົດ.

- ເຮັດໃຫ້ວຽກງານຍຸຕິທຳຮາກຖານກາຍເປັນຂະບວນການຂອງມະຫາຊົນ, ບົນພື້ນຖານດັ່ງກ່າວເພື່ອສືບຕໍ່ປັບປຸງ ແລະ ເພີ່ມທະວີຄວາມສາມັກຄີເປັນເອກະພາບລະຫວ່າງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆບົນພື້ນຖານລະບຽບກົດໝາຍ, ຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍຢູ່ບ້ານ.

- ສ້າງ ແລະ ປັບປຸງແບບແຜນຄຸ້ມຄອງບໍລິຫານບ້ານໃຫ້ໄປຕາມລະບຽບກົດໝາຍເທື່ອລະກ້າວຕາມຈິດໃຈເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກ່ຽວກັບການສ້າງລັດແຫ່ງກົດໝາຍເທື່ອລະກ້າວມາແຕ່ຮາກຖານບ້ານ.

### 3. ເນື້ອໃນວຽກງານຍຸຕິທຳຮາກຖານ.

ວຽກງານຍຸຕິທຳຮາກຖານມີເນື້ອໃນກວ້າງຂວາງ ແລະ ເລິກເຊິ່ງ ຊຶ່ງພົວພັນເຖິງວຽກງານທຸກດ້ານຢູ່ຮາກຖານ, ແຕ່ໃນສະເພາະໜ້ານີ້ພວກເຮົາຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດຫ້າວຽກງານຈຸດສຸມດັ່ງນີ້:

(1). ວຽກງານສຶກສາອົບຮົມ, ໂຄສະນາເຜີຍແຜ່ສ້າງສະຕິເຄົາລົບກົດໝາຍ

ວຽກງານໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍເພື່ອສ້າງສະຕິເຄົາລົບກົດໝາຍເປັນວຽກງານທີ່ສຳຄັນຢູ່ແຖວໜ້າຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກ່ຽວກັບການສ້າງລັດແຫ່ງກົດໝາຍເທື່ອລະກ້າວກໍຄືການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງລັດເຮົາໃນແຕ່ລະໄລຍະຊຶ່ງຂະແໜງການ, ອົງການຂັ້ນສູນກາງກໍຄືອົງການນຳ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆຈະຕ້ອງເພີ່ມທະວີການຊີ້ນຳ, ຄຸ້ມຄອງການຈັດຕັ້ງປະຕິບັດໃຫ້ເປັນຂະບວນການຢ່າງແຂງແຮງ, ກວ້າງຂວາງ ແລະ ທົ່ວເຖິງ. ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ປະກາດໃຊ້ອອກມານັ້ນ ຕ້ອງຮັບປະກັນໃຫ້ມີການຈັດພິມເຜີຍແຜ່ ແລະ ໂຄສະນາໃຫ້ສັງຄົມກໍຄືປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈກ່ຽວກັບຄວາມຈຳເປັນກໍຄືຄວາມໝາຍສຳຄັນຂອງການອອກກົດໝາຍນັ້ນ, ພ້ອມກັນນັ້ນ, ກໍຕ້ອງຮັບຮູ້ ແລະ ເຂົ້າໃຈເຖິງສິດທິຂອງຕົນທີ່ກຳນົດໄວ້ໃນກົດໝາຍນັ້ນ, ຂໍ້ຫ້າມພ້ອມດ້ວຍນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍດັ່ງກ່າວແນໃສ່ສ້າງສະຕິຕື່ນຕົວເປັນເຈົ້າການເຄົາລົບ ແລະ ປະຕິບັດກົດໝາຍຂອງພົນລະເມືອງໃຫ້ສູງຂື້ນ, ຫຼີກເວັ້ນການກະທຳທີ່ຜິດກັບລະບຽບກົດໝາຍ.

(2). ວຽກງານສ້າງບ້ານປອດຄະດີ

ວຽກງານສ້າງຄອບຄົວ ແລະ ບ້ານປອດຄະດີ, ຊຶ່ງເນື້ອແທ້ແມ່ນການພັດທະນາຄອບຄົວ ແລະ ບ້ານໃຫ້ມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍໃຫ້ນັບມື້ເຂັ້ມງວດ, ສັກສິດ, ເຮັດໃຫ້ແຕ່ລະຄອບຄົວ ແລະ ບ້ານ

ເປັນຫົວໜ່ວຍການຈັດຕັ້ງຮາກຖານ ຂອງລະບອບປະຊາທິປະໄຕປະຊາຊົນ ມີຄວາມໜັກແໜ້ນ, ເຂັ້ມແຂງ ສາມາດເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນໃນທຸກດ້ານ, ສະກັດກັ້ນ ແລະ ແກ້ໄຂທຸກໆປະກົດການຫຍໍ້ທໍ້ ແລະ ຂໍ້ຂັດແຍ່ງທີ່ບໍ່ຮ້າຍແຮງຢູ່ໃນຄອບຄົວ ແລະ ບ້ານດ້ວຍຕົນເອງ ແນໃສ່ປົກປັກຮັກສາມູນເຊື້ອ ແລະ ເພີ່ມທະວີຄວາມສາມັກຄີປອງດອງຂອງປະຊາຊົນພາຍໃນບ້ານ, ສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃຫ້ແກ່ສັງຄົມຢູ່ພາຍໃນບ້ານ.

(3). ວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ

ວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນມີບົດບາດສຳຄັນຍິ່ງໃນການສະກັດກັ້ນ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆຢູ່ຂັ້ນບ້ານນັບແຕ່ຫົວທີດ້ວຍວິທີປະນີປະນອມກັນ. ສະນັ້ນ, ມີຄວາມຈຳເປັນຕ້ອງໄດ້ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ເພື່ອສາມາດສຶກສາອົບຮົມປະຊາຊົນພາຍໃນບ້ານໃຫ້ມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ, ຮູ້ຈັດຕັ້ງນຳພາແກ້ໄຂຂໍ້ຂັດແຍ່ງຕ່າງໆຢ່າງມີປະສິດທິຜົນ ເພື່ອເຮັດໃຫ້ບ້ານມີຄວາມສະຫງົບ ແລະ ມີຄວາມຍຸຕິທຳ.

ໃນນີ້, ໃຫ້ເອົາໃຈໃສ່ຈັດຕັ້ງບຳລຸງຝຶກອົບຮົມກົດໝາຍ, ສິດ, ໜ້າທີ່, ວິທີ ແລະ ຂັ້ນຕອນໄກ່ເກ່ຍໃຫ້ສະມາຊິກຂອງໜ່ວຍໄກ່ເກ່ຍເພື່ອຮັບປະກັນເຮັດໃຫ້ການໄກ່ເກ່ຍໄດ້ຮັບຜົນດີ.

(4). ວຽກງານຍຸຕິທຳເດັກ

ວຽກງານຍຸຕິທຳເດັກເປັນວຽກງານໃໝ່, ແຕ່ກໍເປັນວຽກງານທີ່ມີຄວາມໝາຍສຳຄັນຕິດພັນກັບການພັດທະນາ ແລະ ສ້າງບຸກຄະລາກອນສືບທອດຂອງຊາດ. ສະນັ້ນ, ທຸກໆຂະແໜງການ, ອົງການຂອງສູນກາງກໍຄືອົງການນຳ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈະຕ້ອງເອົາໃຈໃສ່ຊີ້ນຳ-ນຳ

ພາຕໍ່ວຽກງານດັ່ງກ່າວນີ້ໃຫ້ເປັນປົກກະຕິ, ຕໍ່ເນື່ອງ, ເຮັດໃຫ້ອົງການປົກຄອງບ້ານ, ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານເຂົ້າໃຈ ແລະ ກຳໄດ້ຢ່າງເປັນເອກະພາບກ່ຽວກັບຄວາມໝາຍຄວາມສຳຄັນ, ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດວຽກງານຍຸຕິທຳເດັກ. ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່ໃຫ້ປະຊາຊົນຢູ່ໃນຮາກຖານບ້ານຕະຫຼອດຮອດເດັກໃຫ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກນີ້ຢ່າງຕັ້ງໜ້າ, ແນໃສ່ສະກັດກັ້ນປາກົດການເດັກກະທຳຜິດລະເມີດລະບຽບກົດໝາຍ ແລະ ແກ້ໄຂການກະທຳຜິດຂອງເດັກຢ່າງເໝາະສົມ, ທັນເວລາ.

(5). ວຽກງານສ້າງບຸກຄະລາກອນກົດໝາຍໃຫ້ຮາກຖານບ້ານ ແລະ ກຸ່ມບ້ານ

ວຽກງານສ້າງບຸກຄະລາກອນກົດໝາຍໃຫ້ຮາກຖານ ແມ່ນມີຄວາມສຳຄັນຍິ່ງຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກ່ຽວກັບການສ້າງລັດແຫ່ງກົດໝາຍ, ແນໃສ່ຮັບປະກັນການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານໃຫ້ມີຜົນສຳເລັດໃນແຕ່ລະໄລຍະ, ທັງຮັບປະກັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງຮອບດ້ານ, ການສ້າງບ້ານ, ແລະ ກຸ່ມບ້ານພັດທະນາ, ເຮັດໃຫ້ການສ້າງນັກກົດໝາຍຕິດພັນກັບຂະບວນການຕົວຈິງຂອງທ້ອງຖິ່ນ ແລະ ຮາກຖານຕາມທິດ **"ທັງຮຽນ, ທັງເຮັດວຽກ"** ຫຼື ຮຽນທິດສະດີຕິດພັນກັບພຶດຕິກຳຕົວຈິງເພື່ອເປັນການຫຼໍ່ຫຼອມທັດສະນະ ແລະ ຈິດໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງແຕ່ຫົວທີ ແລະ ສ້າງໃຫ້ກາຍເປັນນັກກົດໝາຍປະຈຳຢູ່ຮາກຖານ ຫຼື ເມືອງ ແລະ ເປັນຜູ້ສືບທອດໃນອະນາຄົດ.

ສະນັ້ນ, ບັນດາຂະແໜງການ, ອົງການຂອງສູນກາງ, ໂດຍສະເພາະແມ່ນຂະແໜງຍຸຕິທຳ, ອົງການນຳ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນຈະຕ້ອງເອົາໃຈໃສ່ຊີ້ນຳ-ນຳພາຕໍ່ວຽກງານດັ່ງກ່າວ ໃຫ້ຮັບປະກັນຄຸນນະພາບ ແລະ ປະສິດທິຜົນ.

**4. ທິດຊີ້ນຳການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານ.**

(1). ການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານຕ້ອງຕິດພັນກັບຂະບວນການວຽກງານຮາກຖານ, ການສ້າງຮາກຖານບ້ານ ແລະ ກຸ່ມບ້ານພັດທະນາໂດຍແມ່ນຫ້ອງການກໍ່ສ້າງຮາກຖານຂອງແຂວງ ແລະ ໜ່ວຍງານກໍ່ສ້າງຮາກຖານຂອງເມືອງເປັນໃຈກາງໃນການປະສານສົມທົບ ເພື່ອຈັດຕັ້ງປະຕິບັດ.

(2). ເພີ່ມທະວີຄວາມຮັບຜິດຊອບຊີ້ນຳ, ຄຸ້ມຄອງຂອງອົງການນຳ, ອົງການປົກຄອງທ້ອງຖິ່ນເປັນຕົ້ນແມ່ນ ຂັ້ນເມືອງ ແລະ ຮາກຖານບ້ານ, ກຸ່ມບ້ານຕໍ່ວຽກງານຍຸຕິທຳຮາກຖານ. ພ້ອມກັນນີ້, ກໍຕ້ອງເສີມຂະຫຍາຍບົດບາດ ແລະ ຄວາມເປັນເຈົ້າການຂອງຂະແໜງຍຸຕິທຳຕໍ່ວຽກງານດັ່ງກ່າວນີ້.

(3). ການຈັດຕັ້ງດຳເນີນວຽກງານຍຸຕິທຳຮາກຖານ ຕ້ອງຖືເອົາຄຸນນະພາບເປັນຕົ້ນຕໍ ແລະ ເອົາປະລິມານເປັນອັນສຳຄັນ.

(4). ດຳເນີນເປັນເທື່ອລະກ້າວຢ່າງໜັກແໜ້ນ ໂດຍມີການຈັດຕັ້ງເຮັດທົດລອງ ແລ້ວຈິ່ງຜັນຂະຫຍາຍ, ຮັບປະກັນລັກສະນະຕໍ່ເນື່ອງ ແລະມີປະສິດທິຜົນ.

**5. ຄວາມຮັບຜິດຊອບການຈັດຕັ້ງປະຕິບັດ**

(1). ໃຫ້ກະຊວງຍຸຕິທຳ ເອົາໃຈໃສ່ຈັດຕັ້ງປະຕິບັດບາງວຽກງານສຳຄັນດັ່ງນີ້:

- ຄົ້ນຄວ້າ ແລະ ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ເຊັ່ນ: ວຽກງານໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ວຽກງານສ້າງບ້ານປອດຄະດີ, ວຽກງານແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ວຽກງານຍຸຕິທຳເດັກ ແລະ ການສ້າງບຸກຄະລາກອນກົດໝາຍໃຫ້ຮາກຖານ, ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງຜັນຂະຫຍາຍໄດ້ງ່າຍ, ວ່ອງໄວທັນການ ແລະ ມີປະສິດທິຜົນ.

- ປັບປຸງປຶ້ມຄູ່ມືກ່ຽວກັບວຽກງານຍຸຕິທຳຮາກຖານ ພ້ອມທັງຈັດຕັ້ງການຝຶກອົບຮົມວຽກງານດັ່ງກ່າວໃຫ້ທົ່ວເຖິງ. ພ້ອມກັນນີ້, ກໍຕ້ອງເອົາໃຈໃສ່ຊີ້ນຳການຈັດຕັ້ງເຮັດທົດລອງເພື່ອສະຫຼຸບຖອດຖອນບົດຮຽນ ແລ້ວຈຶ່ງຜັນຂະຫຍາຍໄປສູ່ແຕ່ລະບ້ານ ແລະ ກຸ່ມບ້ານຈຸດສຸມຂອງທົ່ວເມືອງ.

- ຄົ້ນຄວ້າ ແລະ ປັບປຸງລັກສູດການສອນ-ການຮຽນລະບົບຊັ້ນຕົ້ນ ແລະ ຊັ້ນກາງເພື່ອຮັບປະກັນການສ້າງບຸກຂະລາກອນກົດໝາຍໃຫ້ແກ່ຮາກຖານບ້ານ. ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ປັບປຸງລະບົບການສອນ-ການຮຽນກົດໝາຍຂອງບັນດາວິທະຍາໄລກົດໝາຍໃຫ້ມີຄຸນນະພາບສູງຂຶ້ນ.

- ຄົ້ນຄວ້າ ແລະ ຂຶ້ນແຜນງົບປະມານແຕ່ລະປີກ່ຽວກັບວຽກງານຍຸຕິທຳຮາກຖານເພື່ອສະເໜີໃຫ້ກະຊວງກ່ຽວຂ້ອງ ແລະ ລັດຖະບານພິຈາລະນາ. ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ຊີ້ນຳຂະແໜງຍຸຕິທຳຂັ້ນຕ່າງໆ ຫັນເອົາວຽກງານຍຸຕິທຳຮາກຖານເປັນແຜນງານ, ໂຄງການ, ກິດຈະການຕົວຈິງ, ທັງຄົ້ນຄວ້າຊອກຫາແຫຼ່ງທຶນ ເພື່ອຊ່ວຍໝູນໃຫ້ທ້ອງຖິ່ນໃນການຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນເປັນຈິງ.

- ສົມທົບກັບທະບວງການປົກຄອງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ ເພື່ອຊີ້ນຳການປັບປຸງຂະແໜງຍຸຕິທຳທ້ອງຖິ່ນ, ເປັນຕົ້ນແມ່ນຂັ້ນເມືອງ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຂຶ້ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານໃຫ້ໄດ້ຮັບຜົນດີ.

- ສົມທົບກັບສະຫະພັນແມ່ຍິງ, ແນວລາວສ້າງຊາດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ກະຊວງສຶກສາທິການ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຈັດຕັ້ງປະຕິບັດວຽກງານຍຸຕິທຳເດັກ ແລະ ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໃຫ້ໜັກແໜ້ນ, ເຂັ້ມແຂງ.

(2). ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ສົມທົບກັບກະຊວງຍຸຕິທຳ ຄົ້ນຄວ້າ ແລະ ຂຶ້ນແຜນງົບປະມານເພື່ອຮັບໃຊ້ວຽກງານຍຸຕິທຳຮາກຖານ, ເປັນຕົ້ນແມ່ນການຈັດພິມປຶ້ມລວມກົດໝາຍໃນໂຂງ

ເຂດຕ່າງໆ ເພື່ອຈຳໜ່າຍໃນລາຄາເໝາະສົມ ແລະ ແຈກຢາຍໃຫ້ຄົບແຕ່ລະບ້ານ ແລະ ກຸ່ມບ້ານ ເພື່ອເປັນບ່ອນອີງໃຫ້ຄະນະພັກ, ອົງການປົກຄອງ ແລະ ພະນັກງານກໍ່ສ້າງຮາກຖານໄດ້ຄົ້ນຄ້ວາ, ຮໍ່າຮຽນ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ; ຄົ້ນຄວ້າຂຶ້ນແຜນງົບປະມານກ່ຽວກັບການສ້າງບຸກຄະລາກອນກົດໝາຍໃຫ້ບ້ານ ແລະ ກຸ່ມບ້ານໃນແຕ່ລະໄລຍະ. ພ້ອມກັນນັ້ນ, ກໍໃຫ້ຊີ້ນຳຂະແໜງການສາຍຕັ້ງຂອງຕົນໃຫ້ເອົາໃຈໃສ່ສົມທົບກັບຂະແໜງຍຸຕິທຳຂັ້ນແຂວງ, ຂັ້ນເມືອງ ຄົ້ນຄວ້າ ແລະ ຂຶ້ນແຜນງົບປະມານເພື່ອຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານຕາມຄວາມເໝາະສົມ.

(3). ໃຫ້ບັນດາກະຊວງ ແລະ ອົງການທຽບເທົ່າຂັ້ນສູນກາງ ສົມທົບກັບກະຊວງຍຸຕິທຳ ຄົ້ນຄວ້າ, ຈັດພິມ ແລະ ຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍໃນຂະແໜງການ ແລະ ອົງການຂອງຕົນໃຫ້ທົ່ວເຖິງຮາກຖານບ້ານ ແລະ ກຸ່ມບ້ານຈຸດສຸມຕ່າງໆຂອງນະຄອນຫຼວງ, ແຂວງ, ເມືອງ ເພື່ອເຮັດໃຫ້ກົດໝາຍຂອງຕົນເຂົ້າເຖິງປະຊາຊົນ. ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ຈັດຕັ້ງ ແລະ ປັບປຸງຕາໜ່າງການໂຄສະນາກົດໝາຍໃນຂະແໜງການ ແລະ ອົງການຂອງຕົນໃຫ້ເຂັ້ມແຂງເພື່ອສາມາດເຮັດໃຫ້ວຽກງານໂຄສະນາກົດໝາຍເປັນປົກກະຕິ ແລະ ຕໍ່ເນື່ອງ, ແນໃສ່ສ້າງສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍຂອງພົນລະເມືອງ ແລະ ປະຊາຊົນໃຫ້ສູງຂຶ້ນເທື່ອລະກ້າວ.

(4). ໃຫ້ເຈົ້າຄອງນະຄອນຫຼວງ, ບັນດາເຈົ້າແຂວງ ແລະ ເຈົ້າເມືອງເອົາໃຈໃສ່ຊີ້ນຳ-ນຳພາຂະແໜງຍຸຕິທຳເພື່ອຄົ້ນຄວ້າ ແລະ ຫັນຄຳສັ່ງສະບັບນີ້ເປັນຄຳແນະນຳ, ແຜນການ, ໂຄງການຂອງແຂວງ, ເມືອງ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ຊີ້ນຳພາກສ່ວນຮັບຜິດຊອບວຽກງານກໍ່ສ້າງຮາກຖານຂັ້ນຂອງຕົນໃຫ້ເປັນໃຈກາງໃນການປະສານສົມທົບກັບຂະແໜງຍຸຕິທຳ, ຂະແໜງການ ແລະ ອົງການຈັດຕັ້ງຕ່າງໆໃນການຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານ, ເຮັດໃຫ້ວຽກງານຍຸຕິທຳຮາກຖານກົມກຽວກັບທຸກໆຂະບວນ

ການຂອງຂະແໜງການ ແລະ ອົງການຕ່າງໆຢູ່ຂັ້ນບ້ານ ແລະ ກຸ່ມບ້ານ, ຮັບປະກັນການປະຢັດ ແລະ ການນຳໃຊ້ກຳລັງແຮງສັງລວມກ່ຽວກັບງົບປະມານ, ກຳລັງພະນັກງານ, ພາຫະນະ ແລະ ອື່ນໆ ເຂົ້າໃນວຽກງານຮາກຖານ ແລະ ວຽກງານຍຸຕິທຳຮາກຖານ. ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ຊີ້ນຳການປັບປຸງການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງຂະແໜງຍຸຕິທຳຂັ້ນແຂວງ, ຂັ້ນເມືອງໃຫ້ສາມາດເປັນເສນາທິການຊ່ວຍອົງການປົກຄອງແຂວງ ເພື່ອຈັດຕັ້ງປະຕິບັດວຽກງານຍຸຕິທຳຮາກຖານຢ່າງມີປະສິດທິຜົນ.

(5). ມອບໃຫ້ລັດຖະມົນຕີວ່າການກະຊວງຍຸຕິທຳ, ເປັນຜູ້ຊ່ວຍນາຍົກລັດຖະມົນຕີ ໃນການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ແລ້ວສະຫຼຸບລາຍງານໃຫ້ນາຍົກລັດຖະມົນຕີເປັນແຕ່ລະໄລຍະ ຢ່າງເປັນປົກກະຕິ.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**

**ບົວສອນ ບຸບຜາວັນ**